ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຈຳປາສັກ

ພະແນກອຸດສາຫະກຳ ແລະ ການຄ້າ

ຄະນະກຳມະການປະມູນໄມ້ຍຶດຂັ້ນແຂວງ

No No 1010

ເລກທີ.........../ອຄ.ຈສ

ແຂວງຈຳປາສັກ, ລົງວັນທີ 14 - 08 - 1[illegible]

# ແຈ້ງການ

ເຖິງ: - ທ່ານປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ.

- ທ່ານປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດປະຈຳແຂວງຈຳປາສັກ.
- ສະມາຄົມປຸງແຕ່ງໄມ້ ແລະ ເຟີນີເຈີໄມ້ສຳເລັດຮູບທົ່ວປະເທດ.
- ຜູ້ອຳນວຍການໂຮງງານປຸງແຕ່ງໄມ້ ແລະ ເຟີນີເຈີໄມ້ສຳເລັດຮູບທົ່ວປະເທດ.

**ເລື່ອງ:** ການປະມູນຂາຍໄມ້ຍຶດຂອງລັດ ທີ່ເກັບໄວ້ຢູ່ສະໜາມ II ແລະ III.

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 13/05/2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນ, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມຄຳສັ່ງແນະນຳຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0336/ອຄ.ກຂອ, ລົງວັນທີ 13/03/2017 ເລື່ອງ: ແນະນຳການຈັດຕັ້ງປະມູນຂາຍໄມ້ທີ່ຍຶດເປັນຂອງລັດ.
- ອີງຕາມຂໍ້ຕົກລົງຂອງເຈົ້າແຂວງຈຳປາສັກ ສະບັບເລກທີ 1407/ຈຂ.ຈສ, ລົງວັນທີ 27/12/2016 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບປະມູນໄມ້ຍຶດຂັ້ນແຂວງ.

ຄະນະກຳມະການຮັບຜິດຊອບປະມູນໄມ້ຍຶດຂັ້ນແຂວງ(ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາສະມາຊິກຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ພາຍໃນແຂວງ, ແຫ່ງຊາດ, ສະມາຄົມເຟີນີເຈີ, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນີເຈີ ແລະ ທຸລະກິດໄມ້ ໃນຂອບເຂດທົ່ວປະເທດ ເພື່ອເຂົ້າປະມູນຊື້-ຂາຍບັ້ງໄມ້ຍຶດ **ຈຳນວນ 782.044 ທ່ອນສັ້ນ/ຕົບ/ເສັ້ນ, ບໍລິມາດ 3.296,287 ມກ** ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ໄມ້ຍຶດຢູ່ໂຮງງານປຸງແຕ່ງໄມ້ແສງຊະນະໄຊ ຊະນິດໄມ້ດູ່ ມີຈຳນວນ 357.058 ຕົບ/ເສັ້ນ, ບໍລິມາດ: 1.422,344 ແມັດກ້ອນ.
2. ໄມ້ຍຶດຢູ່ໂຮງງານເຟີນີເຈີລັດສະໝີໄຊກ ຈຳນວນ 420.482 ຕົບ/ເສັ້ນ, ບໍລິມາດ 1.776,878 ແມັດກ້ອນ ເຊິ່ງໃນນັ້ນມີ:
   - ຊະນິດໄມ້ດູ່ ຈຳນວນ 419.986 ຕົບ/ເສັ້ນ, ບໍລິມາດ 1.765,659 ມກ
   - ຊະນິດໄມ້ປະດົງ ຈຳນວນ 479 ຕົບ, ບໍລິມາດ 2,871 ມກ
   - ຊະນິດໄມ້ແຕ້ ຈຳນວນ 17 ຕົບ, ບໍລິມາດ 8,348 ມກ
3. ໄມ້ຍຶດຢູ່ກອງບັນຊາການ ປກສ ເມືອງປະທຸມພອນ, ແຂວງຈຳປາສັກ ຈຳນວນ 330 ຕົບ, ບໍລິມາດ 36,124 ມກ ໃນນັ້ນ: - ຊະນິດໄມ້ດູ່ ມີຈຳນວນ 326 ຕົບ, ບໍລິມາດ 34,654 ມກ
   - ຊະນິດໄມ້ແດງ ມີຈຳນວນ 4 ຕົບ, ບໍລິມາດ 1,470 ມກ
4. ໄມ້ຍຶດຢູ່ໂຮງງານເຟີນີເຈີສອນໄຊ ເມືອງໂຂງ, ແຂວງຈຳປາສັກ ຈຳນວນ 4.174 ທ່ອນສັ້ນ/ຕົບສັ້ນ, ບໍລິມາດ 60,941 ແມັດກ້ອນ ໃນນັ້ນ:
   - ຊະນິດໄມ້ດູ່ທ່ອນສັ້ນ ມີຈຳນວນ 3.061 ທ່ອນ, ບໍລິມາດ 44,714 ມກ
   - ຊະນິດໄມ້ດູ່ຕົບສັ້ນ ມີຈຳນວນ 1.113 ຕົບ, ບໍລິມາດ 16,227 ມກ

ໃຫ້ບັນດາທ່ານເຂົ້າມາພົວພັນຊື້ຊອງປະມູນ ທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ( ຂະແໜງການຄ້າພາຍໃນ) ໃນໂມງລັດຖະການ ກຳນົດ 15 ວັນ( ນັບແຕ່ວັນທີ 15 ຫາ 31 ສິງຫາ 2018 )

ສຳລັບມື້ເປີດຊອງປະມູນ ແມ່ນວັນທີ 03 ກັນຍາ 2018, ເວລາ 09:00 ໂມງ ສະຖານທີ່ຫ້ອງປະຊຸມຂອງ ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ.

- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 09:30 ໂມງ ຂອງວັນທີ 03 ກັນຍາ 2018 ຈຶ່ງໃຫ້ມາມອບ-ສົ່ງ ນຳຄະນະກຳມະການຮັບຜິດຊອບປະມູນໄມ້ຢືດ ທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ, ຖ້າກາຍຖືວ່າສະຫຼະສິດ.
- ລາຄາຊອງປະມູນ : 1.000.000 ກີບ/ຊອງ( ສຳລັບຄ່າຊອງປະມູນນັ້ນແມ່ນບໍ່ສົ່ງຄືນ )

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອເຂົ້າຮ່ວມການປະມູນຊື້-ຂາຍໄມ້ ຕາມກຳນົດເວລາຂ້າງເທິງດ້ວຍ.

ຮອງຫົວໜ້າພະແນກ

(ຄະນະຊີ້ນຳກຳມະການຮັບຜິດຊອບປະມູນໄມ້ຢືດ)

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຈຳປາສັກ

ວິໄລສອນ ແກ້ວລາສີ

ຕິດຕໍ່ພົວພັນ:

1. ທ່ານ ທອງສຸກ ກອງແກ້ວ 020 96519 888
2. ທ່ານ ນາງ ອຸໄທທິບ ວົງຈັນທະລາ 020 55630 937
3. ທ່ານ ທັດສະນະເດືອນ ຄຳແກ້ວ 020 95440 773
4. ທ່ານ ນາງ ວັນເພັງ ສຸລິຍາ 020 22028 886